Washington State Department of Social & Health Services
Transforming lives

STATE OF WASHINGTON
DEPARTMENT OF SOCIAL AND HEALTH SERVICES
DIVISION OF CHILD SUPPORT (DCS)

# ສິດທິແລະຄວາມຮັບຜິດຊອບຂອງພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ
# Noncustodial Parent's Rights and Responsibilities

ພະແນກເກັບເງິນລ້ຽງລູກ (DCS):

1. ຕັ້ງແລະບັງຄັບໃຊ້ຄໍາສັ່ງເກັບເງິນລ້ຽງລູກ ແລະ ຄວາມຮັບຜິດຊອບໃນການຊ່ວຍເຫລືອພະຍາບານ.
2. ກວດເບິ່ງຄໍາສັ່ງເກັບເງິນລ້ຽງລູກຄືນສໍາລັບການແກ້ໄຂດັດແປງທີ່ອາດເປັນໄປໄດ້.
3. ຮັບ,ບັນທຶກ,ແລະແຈກຈ່າຍການຈ່າຍເງິນລ້ຽງລູກຜ່ານຫ້ອງການທະບຽນເງິນລ້ຽງລູກຂອງຣັດວໍຊິງຕັນ (WSSR).

## ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ

ທ່ານແມ່ນພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ. ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງແມ່ນພໍ່ທີ່ໃຫ້ກໍາເນີດ, ຫລື ພໍ່ຜູ້ທີ່ຖືກຮັບຮູ້ວ່າຮັບເອົາມາລ້ຽງ ຫລື ພໍ່ທີ່ຖືກຕັດສິນອອກມາຈາກສານ, ແມ່ຜູ້ໃຫ້ກໍາເນີດ, ຫລື ແມ່ຜູ້ທີ່ຖືກຕັດສິນອອກມາຈາກສານ ຫລື ທີ່ຮັບເອົາມາລ້ຽງຜູ້ທີ່ຕ້ອງໃຫ້ການອູ້ມຊູດ້ານການເງິນແກ່ເດັກທີ່ຫວັງເພິ່ງ. ກົດຫມາຍຣັດ ແລະ ຣັຖບານກາງບົ່ງຫນ້າທີ່ນີ້.

## ການຈ່າຍເງິນລ້ຽງລູກ

ຕາມທັມມະດາແລ້ວ, ທ່ານຈະຕ້ອງໄດ້ຈ່າຍເງິນລ້ຽງລູກ. ຫລັງຈາກທີ່ພະແນກ DCS ໄດ້ເອົາໃບແຈ້ງການໃຫ້ທ່ານກໍານົດໃຫ້ທ່ານຈ່າຍເງິນລ້ຽງລູກ, ພະແນກ DCS **ຈະບໍ່ໃຫ້ເຄຣດິດ** ບັນຊີຂອງທ່ານສໍາລັບການຈ່າຍເງິນທີ່ຖືກສົ່ງໄປໃຫ້ຄົນໃດຄົນນຶ່ງນອກຈາກທະບຽນ WSSR, ສານຂອງຊົນເຜົ່າ ຫລື ອົງການຊ່ວຍເກັບເງິນລ້ຽງລູກ, ຫລື ສານຂອງຣັດອື່ນ ຫລື ອົງການຊ່ວຍເກັບເງິນລ້ຽງເດັກ. ພະແນກ DCS ຈະບໍ່ໃຫ້ເຄຣດິດ ບັນຊີຂອງທ່ານສໍາລັບຈ່າຍເງິນທີ່ຖືກຈ່າຍໂດຍກົງໄປຫາອີກຝ່າຍນຶ່ງຂອງຄໍາສັ່ງຈ່າຍເງິນລ້ຽງລູກນອກຈາກວ່າເງິນໄດ້ຖືກຈ່າຍຈາກອົງການສໍາລັບສະວັດດີການເດັກຫວັງເພິ່ງ, ເຊັ່ນວ່າພະແນກປົກຄອງຄວາມປອດພັຍຂອງສັງຄົມ, ກົມແຮງງານ ແລະ ອຸດສະຫະກັມ, ຫລື ກົມວຽກງານນັກຮົບເກົ່າສໍາລັບຈຸດປະສົງຂອງຄວາມຮັບຜິດຊອບໃນເງິນລ້ຽງລູກ.

1. ບອກໃຫ້ພະແນກ DCS ຮູ້ທັນທີຖ້າອົງການເກັບເງິນລ້ຽງລູກຣັດອື່ນຫລື ຊົນເຜົ່າ ຫລື ສານຂອງຣັດ ຫລື ຂອງຊົນເຜົ່າບອກໃຫ້ທ່ານຈ່າຍເງິນຊ່ວຍລ້ຽງລູກໃຫ້ເຂົາເຈົ້າ.
2. ຢ່າສົ່ງການຈ່າຍເງິນໃຫ້ຄົນໃດຄົນນຶ່ງນອກຈາກທີ່ຢູ່ສໍາລັບ WSSR ທີ່ຖືກບົ່ງຢູ່ຂ້າງລຸ່ມນີ້ນອກຈາກວ່າພະແນກ DCS ໄດ້ບອກໃຫ້ທ່ານຮູ້ເປັນລາຍລັກອັກສອນວ່າພວກເຮົາໄດ້ປິດສໍານວນຂອງທ່ານ.

ທ່ານຕ້ອງທໍາການຈ່າຍເງິນລ້ຽງລູກທຸກໆຢ່າງໄປຫາທະບຽນເງິນລ້ຽງລູກຂອງຣັດວໍຊິງຕັນ (WSSR). ທ່ານຈະຈ່າຍໂດຍແບບວິທີຕໍ່ລົງໄປນີ້ແບບໃດແບບນຶ່ງໄດ້:

1. ການຫັກເອົາຈາກເງິນເດືອນ. ຄໍາສັ່ງຈ່າຍເງິນລ້ຽງລູກສ່ວນຫລາຍອະນຸຍາດໃຫ້ພະແນກ DCSທີ່ຈະເກັບເງິນລ້ຽງລູກໂດຍຜ່ານການຫັກເອົາຈາກເງິນເດືອນ ຫລື ບົ່ງໃຫ້ຈ່າຍໂດຍຜ່ານ WSSR.ຖ້າຫາກວ່າຄໍາສັ່ງຂອງທ່ານອະນຸຍາດໃຫ້ພະແນກ DCS ທີ່ຈະເຮັດແນວນັ້ນ, ພະແນກDCS ຈະພະຍາຍາມທີ່ຈະເກັບເອົາເງິນລ້ຽງລູກໂດຍການຫັກເອົາຈາກເງິນເດືອນ.
2. ເຊັກສ່ວນຕົວ,ມັນນີອໍເດີ,ເຊັກຮັບປະກັນ.ສົ່ງການຈ່າຍເງິນທາງເຊັກຫລືມັນນີອໍເດີທຸກໆຢ່າງໄປທີ່:

   WASHINGTON STATE SUPPORT REGISTRY
   PO BOX 45868
   OLYMPIA WA 98504-5868

3. ການໂອນເງິນທາງເອເລກໂຕຣນິກ (EFT). EFT ອະນຸຍາດໃຫ້ມີການຫັກເອົາເງິນລ້ຽງລູກໂດຍໂອໂຕມາຕິກຈາກບັນຊີເຊັກກິ້ງຫລືເຊວວິ້ງແຕ່ລະເດືອນ. ເພື່ອຣາຍລະອຽດເພີ້ມເຕີມກ່ຽວກັບEFT,ໂທຣະສັບໄປທີ່ 800-468-7422.
4. ອິນເຕີແນດ.ການຈ່າຍເງິນທາງອິນເຕີແນດອະນຸຍາດໃຫ້ມີການຫັກເອົາເງິນລ້ຽງລູກຈາກບັນຊີເຊັກກິ້ງຫລືເຊວວິ້ງ. ເພື່ອຣາຍລະອຽດເພີ້ມເຕີມ.ແວ່ເບິ່ງແວບໄຊທ໌ຂອງ DCS ໄດ້ທີ່ https://secureaccess.wa.gov..
5. ບັດເຄຣດິດ ຫລື ເດບິດ. ເພື່ອຣາຍຣະອຽດເພີ້ມເຕີມ, ແວ່ເບິ່ງແວບໄຊທ໌ຂອງ DCS ໄດ້ທີ່ https://www.dshs.wa.gov/esa/division-child-support/creditdebit-card-payments.

ຖ້າຫາກວ່າທະນາຄານຂອງທ່ານສົ່ງເຊັກໃບນຶ່ງຂອງເຊັກຂອງທ່ານຄືນມາຫລືບໍ່ຍອມຮັບເອົາການໂອນເງິນທາງEFTຫລືອິນເຕີແນດຍ້ອນບໍ່ມີເງິນພຽງພໍ,ພະແນກ DCS ຈະຮັບເອົາການຈ່າຍເງິນເທື່ອຫນ້າເປັນເງິນສົດ,ມັນນີອໍເດີ,ເຊັກເງິນສົດ,ເຊັກຮັບຮອງ,ຫລືການຫັກເອົາເງິນເດືອນເທົ່ານັ້ນ.
ລວມເອົາເລກບັນຊີຂອງທ່ານໃສ່ນໍາ **IN____________**ໃສ່ໃນການຈ່າຍເງິນເງິນ ແລະ ຫນັງສືຂຽນມາທຸກໆຢ່າງ.

ຖ້າຫາກວ່າທ່ານມີເຫດຜົນຖືກຕ້ອງຕາມກົດຫມາຍສໍາລັບບໍ່ໃຫ້ການຊ່ວຍເຫລືອດ້ານການເງິນສໍາລັບພວກລູກຂອງທ່ານຫລື ຖ້າຫາກວ່າພະແນກ DCS ໄດ້ພົວພັນກັບທ່ານຢ່າງຜິດພາດໃນການດໍາເນີນການອັນນີ້, ແຈ້ງບອກໃຫ້ພະແນກ DCS ຮູ້ທັນທີໂລດ.

ຖ້າຫາກວ່າພະແນກ DCS ແຈ້ງບອກທ່ານວ່າພວກເຮົາຈະງົດການເກັບເອົາເງິນລ້ຽງລູກຂອງທ່ານໄວ້ກ່ອນ, ຄວາມຮັບຜິດຊອບຂອງທ່ານຈະກາຍເປັນເກັບເອົາໄດ້ໃນອະນາຄົດ. ພະແນກ DCS ຈະແຈ້ງບອກທ່ານກ່ອນທີ່ຈະເຮັດການກະທໍາອັນນີ້ລົງໄປ.

ຖ້າຫາກວ່າທ່ານຖືກກັກຂັງຕົວ ຫລື ຖືກຕັດສິນລົງໂທດໃສ່ຫລາຍກວ່າຫົກເດືອນຢູ່ໃນຄຸກໃຫຍ່, ຄຸກນ້ອຍ, ຫລື ສະຖານທີ່ດັດສ້າງ, ຄໍາສັ່ງຈ່າຍເງິນລ້ຽງລູກຂອງທ່ານຈະຖືກລຸດລົງ (ບັນເທົາທຸກ) ຊົ່ວຄາວໃຫ້ເປັນ $10 ຕໍ່ເດືອນສໍາລັບຄໍາສັ່ງຈ່າຍເງິນລ້ຽງລູກແຕ່ລະຄໍາສັ່ງ. ທ່ານ, ພໍ່ແມ່ຜູ້ທີ່ບໍ່ມີຄວາມຄຸ້ມຄອງ, ຫລື DCS ສາມາດຮ້ອງຂໍເອົາການບັນເທົາທຸກໄດ້. ຖ້າຫາກວ່າການບັນເທົາທຸກຖືກວາງໃຊ້ໃສ່ສໍານວນເອກສານຂອງທ່ານ, ທ່ານຈະໄດ້ຮັບໃບແຈ້ງການຈາກ DCS ທີ່ຈະອະທິບາຍເງື່ອນໄຂຂອງການບັນເທົາທຸກ ແລະ ສິດທິຂອງແຕ່ລະຄົນທີ່ຈະຮ້ອງຂໍເອົາການຟັງເຣື່ອງຖ້າຫາກວ່າເຂົາເຈົ້າບໍ່ເຫັນພ້ອມນໍາ. ຈໍານວນເງິນຈະເພີ້ມຂຶ້ນມາເປັນ 50% ຂອງຄໍາສັ່ງຈ່າຍເງິນລ້ຽງລູກໃນເດືອນທີສີ່ຫລັງຈາກທີ່ທ່ານໄດ້ຖືກປ່ອຍຕົວອອກມາ, ແລະ ຈະເພີ້ມຂຶ້ນໃຫມ່ອີກມາເປັນ 100% ຂອງຈໍານວນດັ້ງເດີມນຶ່ງປີຫລັງຈາກການປ່ອຍຕົວອອກມາ.

## ຄວາມຮັບຜິດຊອບໃນການອູ້ມຊູດ້ານການພະຍາບານ

ຖ້າຫາກວ່າຄຳສັ່ງເງິນລ້ຽງລູກຂອງທ່ານກຳນົດໃຫ້ທ່ານທີ່ຈະເອົາປະກັນພັຍສຸຂະພາບໃຫ້ພວກລູກຂອງທ່ານ, ພແນກ DCS ຈະດຳເນີນງານເພື່ອຈະບັງຄັບໃຊ້ຄວາມຮັບຜິດຊອບອັນນີ້.ຖ້າຫາກວ່າຄຳສັ່ງເງິນລ້ຽງລູກຂອງທ່ານກຳນົດໃຫ້ທ່ານທີ່ຈະຈ່າຍການອູ້ມຊູດ້ານການພະຍາບານເປັນເງິນສົດ, ພແນກ DCS ຈະກໍຕັ້ງຈຳນວນເງິນທີ່ທ່ານຖືກກຳນົດໃຫ້ຈ່າຍແລະເກັບເອົາເງິນຈຳນວນນັ້ນ.

1. ບອກໃຫ້ພແນກ DCS ໂດຍທັນທີໂລດຖ້າຫາກວ່າແນວໃດແນວນຶ່ງໄດ້ປ່ຽນແປງກ່ຽວກັບການຄຸ້ມກັນປະກັນພັຍສຸຂະພາບສຳລັບພວກລູກຂອງທ່ານຜູ້ທີ່ຖືກບົ່ງຊີ້ຢູ່ໃນຄຳສັ່ງຈ່າຍເງິນລ້ຽງລູກຂອງທ່ານ.
2. ການອູ້ມຊູດ້ານການພະຍາບານເປັນເງິນສົດລວມເອົາສ່ວນແບ່ງທີ່ສົມສ່ວນກັນຂອງຣາຍຈ່າຍຄ່າພະຍາບານທີ່ບໍ່ຖືກຈ່າຍເງິນແທນຄືນໃຫ້ ແລະ ສ່ວນແບ່ງຂອງຄ່າທຳນຽມພະຍາບານ (ການຈ່າຍເງິນສົດ) ຖ້າຖືກບົ່ງໂດຍຄຳສັ່ງຂອງທ່ານເມື່ອປະກັນພັຍສຸຂະພາບບໍ່ໄດ້ຖືກເອົາໃຫ້.

ຖ້າຫາກວ່າຄຳສັ່ງເງິນລ້ຽງລູກຂອງທ່ານກຳນົດໃຫ້ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງທີ່ຈະເອົາການຄຸ້ມກັນປະກັນພັຍສຸຂະພາບໃຫ້ຫລືທີ່ຈະຈ່າຍຣາຍຈ່າຍພະຍາບານທີ່ບໍ່ຖືກຮັບປະກັນຈ່າຍໃຫ້,ທ່ານສາມາດຂໍເອົາການບໍຣິການບັງຄັບໃຊ້ຄຳສັ່ງເງິນລ້ຽງລູກເຕັມທີ່ໄດ້ແລະ:

1. ຂໍໃຫ້ພແນກ DCS ທີ່ຈະບັງຄັບໃຊ້ຄວາມຮັບຜິດຊອບຂອງພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງທີ່ຈະເອົາປະກັນພັຍສຸຂະພາບໃຫ້.ພແນກ DCS ຈະບັງຄັບໃຊ້ຄວາມຮັບຜິດຊອບອີງຕາມສະພາບການຂອງກໍຣະນີຂອງທ່ານ.
2. ຂໍໃຫ້ພແນກ DCS ທີ່ຈະເກັບເອົາຣາຍຈ່າຍພະຍາບານທີ່ບໍ່ຖືກຮັບປະກັນຈ່າຍໃຫ້ລວມທັງເງິນຈ່າຍຮ່ວມກັນ,ເງິນຫັກອອກ,ແລະຄ່າທຳນຽມຕາມທີ່ຖືກຕີຄວາມຫມາຍຢູ່ໃນກົດຫມາຍ WAC 388-14A-1020 ຈາກພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງ.

ຖ້າຫາກວ່າຄຳສັ່ງເງິນລ້ຽງລູກຂອງທ່ານບໍ່ກຳນົດໃຫ້ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງທີ່ຈະເອົາປະກັນພັຍສຸຂະພາບໃຫ້,ສ່ວນແບ່ງຂອງຄ່າທຳນຽມພະຍາບານຫລືທີ່ຈະຈ່າຍຄ່າພະຍາບານທີ່ບໍ່ຖືກຮັບປະກັນຈ່າຍໃຫ້,ຕາມທີ່ຖືກຕີຄວາມຫມາຍຢູ່ໃນກົດຫມາຍ WAC 388-14A-1020,ທ່ານສາມາດຂໍໃຫ້ພແນກ DCS ທີ່ຈະກວດເບິ່ງຄຳສັ່ງສຳລັບການດັດແປງຂອງທ່ານຫລືທ່ານສາມາດຍື່ນຄຳຟ້ອງຮ້ອງສຳລັບການດັດແປງໂດຍຕົນເອງ.

## ຂະບົດຂອງການອຸທອນ

**ການຮ່ວມປະຊຸມນຳຄະນະບໍຣິຫານ.** ການຮ່ວມປະຊຸມນຳຄະນະບໍຣິຫານແມ່ນການດຳເນີນການຂອງຄະນະປົກຄອງ (ບໍ່ແມ່ນສານ) ຂອງພແນກ DCS ຊຶ່ງໄດ້ຖືກໃຊ້ເພື່ອແກ້ໄຂການຂັດແຍ້ງຫລາຍໆຢ່າງ,ອະທິບາຍນະໂຍບາຍ,ແລະອະທິບາຍຂໍ້ມູນໃຫ້ກະຈ່າງແຈ້ງ.

1. ການປະຊຸມຂອງຄະນະບໍຣິຫານອາດຈະພິຈາຣະນາເບິ່ງກໍຣະນີເງິນລ້ຽງລູກຄືນທີ່ຖືກສັ່ງອອກມາໂດຍສານແລະທີ່ບໍ່ຖືກສັ່ງອອກມາໂດຍສານທັງສອງຢ່າງ.
2. ການປະຊຸມຂອງຄະນະບໍຣິຫານອາດອອກຄຳຕັດສິນໂດຍບໍ່ຕ້ອງປະຊຸມນຳທ່ານ.ຖ້າທ່ານມີການປະຊຸມ,ທ່ານອາດປຶກສາສຳນວນຂອງທ່ານນຳຄະນະບໍຣິຫານຂອງພແນກ DCS ຜູ້ທີ່ອາດບໍ່ເຫັນພ້ອມນຳຄຳຕັດສິນຂອງພແນກDCS ທີ່ໄດ້ເຮັດມາກ່ອນນັ້ນ.ການປະຊຸມຂອງຄະນະບໍຣິຫານສາມາດປ່ຽນແປງການກະທຳບາງຢ່າງທີ່ຖືກເຮັດໂດຍພະນັກງານຂອງພແນກ DCS ແຕ່ວ່າບໍ່ສາມາດປ່ຽນແປງການກະທຳທີ່ກຳນົດທາງກົດຫມາຍ.

**ການດຳເນີນການທາງອັຍການສານ (ການຟັງເຣື່ອງ) .** ການຟັງເຣື່ອງແມ່ນການດຳເນີນການຂອງຝ່າຍການປົກຄອງຄືກັນ (ບໍ່ແມ່ນສານ) . ການຟັງເຣື່ອງແມ່ນແບບທາງການຫລາຍກວ່າການປະຊຸມນຳຄະນະບໍຣິຫານແຕ່ເປັນແບບຕ່ຳກວ່າທາງການກວ່າກະທຳຂອງສານ.

1. ກົດໝາຍຂອງຣັດໃຫ້ມີການຟັງເຣື່ອງແຕ່ບາງສະພາບການເທົ່ານັ້ນ. ຖ້າຫາກວ່າພແນກ DCS ສົ່ງໃບແຈ້ງໃຫ້ທ່ານ, ໃບແຈ້ງຈະບອກໃຫ້ທ່ານຮູ້ວ່າທ່ານມີສິດທິໃນການຟັງເຣື່ອງຫລືບໍ່. ຈ່າສານທາງກົດໝາຍຂອງອຳນາດການປົກຄອງ(ALJ) ຈະເປັນປະທານໃນການຟັງເຣື່ອງ. (ALJ) ບໍ່ແມ່ນພະນັກງານຂອງພແນກ DCS.
2. ໃນການຟັງເຣື່ອງ, ALJ ພິຈາຣະນາເບິ່ງສຳນວນເອກສານຂອງທ່ານຄືນ ແລະ ຕັດສິນຕາມການຖົກຖຽງຂອງທ່ານ.ເພື່ອໃຫ້ພແນກ DCS ຢຸດຈາກການບັງຄັບໃຊ້ຄຳສັ່ງເງິນລ້ຽງລູກຂອງທ່ານ, ທ່ານຕ້ອງຮ້ອງຂໍເອົາຟັງເຣື່ອງພາຍໃນ 20 ມື້ (ຖ້າທ່ານໄດ້ຮັບໃບແຈ້ງການຢູ່ໃນຣັດວໍຊິງຕັນ) ຫລື ຣະຫວ່າງ 60 ມື້(ຖ້າທ່ານໄດ້ຮັບໃບແຈ້ງການຢູ່ນອກຣັດວໍຊິງຕັນ) ຫລັງຈາກທ່ານໄດ້ຮັບໃບແຈ້ງການຂອງທ່ານ.
   a. ທ່ານສາມາດຮ້ອງຂໍເອົາການຟັງເຣື່ອງຫລັງຈາກກຳນົດ 20 ມື້ ຫລື 60 ມື້ໄດ້. ຢ່າງໃດກໍດີ, ພແນກ DCSຈະບັງຄັບໃຊ້ຄຳສັ່ງເງິນລ້ຽງລູກຂອງທ່ານໄປຈົນກວ່າພວກເຮົາຈະໄດ້ຮັບຄຳຕັດສິນຂອງການຟັງເຣື່ອງ. ພແນກ DCSຈະບໍ່ສົ່ງເງິນທີ່ເກັບເອົາຈັກຢ່າງນັ້ນຄືນໃນຄະນະລໍຖ້າຄຳຕັດສິນຂອງການຟັງເຣື່ອງ.
   b. ຖ້າທ່ານຮ້ອງຂໍເອົາການຟັງເຣື່ອງນານເກີນກວ່ານຶ່ງປີ ຫລັງຈາກທ່ານໄດ້ຮັບໃບແຈ້ງຂອງທ່ານ, ທ່ານຈະຕ້ອງໄດ້ສະແດງ *ສາເຫດທີ່ດີ* (ແມ່ນເຫດຜົນທີ່ດີສຳລັບເຮັດການຮ້ອງຂໍຊ້າ) .ALJ ອາດບໍ່ອະນຸຍາດການຮ້ອງຂໍຊ້າຂອງທ່ານ. ຢ່າງໃດກໍດີ,ທ່ານອາດມີສິດທິໃນການແກ້ໄຂດັດແປງຄວາມຮັບຜິດຊອບໃນເງິນລ້ຽງລູກໃນອະນາຄົດຂອງທ່ານເຖິງແມ່ນວ່າທ່ານຈະບໍ່ມີເຫດຜົນທີ່ດີສຳລັບການຮ້ອງຂໍຟັງເຣື່ອງຊ້າກໍຕາມ.
3. ທ່ານຈະຖືກສົ່ງໃບໂກປີ້ຂອງຄຳຕັດສິນຂອງ ALJ ໄປໃຫ້.ຄຳຕັດສິນຂອງALJຈະມີຣາຍລະອຽດກ່ຽວກັບສິດທິກ່ຽວກັບການອຸທອນຂອງທ່ານ.
4. ຖ້າເໝາະສົມ, ພແນກ DCS ຈະບອກໃຫ້ທັງສອງຝ່າຍຢູ່ໃນຄຳສັ່ງເງິນລ້ຽງລູກຂອງທ່ານນັ້ນຮູ້ເມື່ອເວລາພວກເຮົາໄດ້ຮັບການຮ້ອງຂໍເອົາການຟັງເຣື່ອງ. ທັງສອງຝ່າຍຈະເຂົ້າມີສ່ວນໃນການຟັງເຣື່ອງໄດ້.

ຖ້າທ່ານມີຄຳຖາມ:

DIVISION OF CHILD SUPPORT
PO BOX 11520
TACOMA WA 98411-5520

ພາຍໃນ ____________________________ ເຂດໂທ ________________________________

ພາຍນອກ __________________________ ເຂດໂທ ________________________________

ສາຍແບບ TTY/TDD ມີໄວ້ບໍຣິການສຳລັບຜູ້ມີບັນຫາດ້ານການປາກເວົ້າ ຫລື ບັນຫາຮູ້ຍິນ.
ແວ່ເຂົ້າເບິ່ງແວບໄຊທ໌ຂອງພວກເຮົາໄດ້ທີ່: www.dshs.wa.gov/dcs/esa/division-child-support

| |
|---|
| ຈະບໍ່ມີຄົນໃດງການຍ້ອນ ຜິວພັນ, ສີສັນ, ເຊື້ອຊາດກຳເນີດ, ລັດທິຄວາມເຊື່ອຖື, ສາສນາ, ເພດ, ອາຍຸ ຫລື ຄວາມພິການ.ຈະຖືກແບ່ງແຍກຊົນຊັ້ນວັນນະໃສ່ໃນດ້ານວຽກງານ, ການບໍຣິການ ຫລື ວຽກງານຕ່າງໆຂອງໂຄງການ.ຟອມໃບນີ້ຍັງມີໄວ້ໃຫ້ໃນແບບຮູບຮ່າງອື່ນຕາມຄຳຮ້ອງຂໍ. |